- ຄະນະສົ່ງເສີມ ... ເພື່ອຊາບ
- ພ/ບ PA ເພື່ອ...
14/6/2017
M. Naumm...

ຮັບ ... 15.6.17

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 21 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 13 ມິຖຸນາ 2017

ສຳນັກງານ ຄຄຊ
ຮັບ ເລກທີ 0622
ວັນທີ 14 JUN 2017
ໂທລະສັບ 021 217770

# ລາຍງານການເຄື່ອນໄຫວປະຈຳ ອາທິດທີ 29/05-02/06/2017 ແລະ ແຜນການເຄື່ອນ ໄຫວໃນອາທິດຕໍ່ໄປຂອງທະນາຄານແຫ່ງ ສປປ ລາວ

## I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າລົງ 0,04% ທຽບເອີໂຣ ເນື່ອງຈາກຕົວເລກເສດຖະກິດຂອງ ສະຫະລັດອາເມລິກາ ອອກມາບໍ່ດີ ເປັນຕົ້ນ ຕົວເລກດັດຊະນີຄວາມເຊື່ອໝັ້ນຜູ້ບໍລິໂພກຫຼຸດລົງຈາກ 119,4 ຈຸດ ໃນເດືອນ 4/2017 ມາເປັນ 117,9 ຈຸດ ໃນເດືອນ 5/2017 ແລະ ຕົວເລກດຸນການຄ້າຂາດດຸນເພີ່ມຂຶ້ນຈາກ 45,3 ຕື້ໂດລາ ໃນເດືອນ 3/2017 ມາເປັນ 47,6 ຕື້ໂດລາ ໃນເດືອນ 4/2017.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 22-26/05/2017 | ອາທິດນີ້ 29/05/-02/06/2017 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,1216 | 1,1220 | -0,04% |
| ໂດລາ/ເຢນ | 110,93 | 111,46 | -0,48% |
| ໂດລາ/ບາດ | 34,05 | 34,14 | -0,26% |
| ໂດລາ/ເປໂຊ | 49,75 | 49,46 | 0,59% |
| ໂດລາ/ຣູເປີຍ | 13.294 | 13.303 | -0,07% |
| ໂດລາ/ໂດລາສິງກະໂປ | 1,3828 | 1,3858 | -0,22% |
| ໂດລາ/ຢວນ | 6,8618 | 6,8186 | 0,63% |

#### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນຫຼຸດລົງ 4,56% ຈາກ 49,15 ໂດລາ/ບາເຣວ ມາເປັນ 46,91 ໂດລາ/ບາເຣວ ຍ້ອນປະລິມານການສະໜອງນ້ຳມັນດິບໂລກເພີ່ມຂຶ້ນ ພາຍຫຼັງກຸ່ມປະເທດຜູ້ຜະລິດນ້ຳມັນ (OPEC) ໄດ້ມີການຜະລິດນ້ຳມັນດິບເພີ່ມຂຶ້ນ 0,25

ລ້ານບາເຣວ/ວັນ ຈາກ 31,97 ລ້ານບາເຣວ/ວັນ ໃນເດືອນ 4/2017 ມາເປັນ 32,22 ລ້ານບາເຣວ/ວັນ ໃນເດືອນ 5/2017;

- ສໍາລັບລາຄາຄໍາຫຼຸດລົງ 0,27% ຈາກ 1.265,74 ໂດລາ/ອອນ ມາເປັນ 1.262,35 ໂດລາ/ອອນ ຍ້ອນນັກລົງທຶນເທຂາຍຄໍາ ແລະ ສັນຍາຊື້-ຂາຍຄໍາ ເພື່ອເກັງກໍາໄລ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,31% ແລະ ອ່ອນຄ່າລົງ 0,58% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບອ່ອນຄ່າ 2,29% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າ 7,22% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 22-26/05/2017 | | | ອາທິດນີ້ 29/05/-02/06/2017 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.332,46 | 8.356,83 | 8.343,01 | 8.353,83 | 8.387,15 | 8.368,79 | -0,26% | -0,36% | -0,31% | -2,42% | -2,14% | -2,29% |
| ບາດ | 243,94 | 245,42 | 244,96 | 246,02 | 246,68 | 246,38 | -0,84% | -0,51% | -0,58% | -7,46% | -7,18% | -7,22% |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາປະຈໍາອາທິດນີ້ ເພີ່ມຂຶ້ນ 0,33% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 22,24%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,32% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 18,70%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈໍາອາທິດ (26/05/-01/06/2017) ເຫັນວ່າ ທທກ ຊື້ໂດລາສຸດທິ 24,67 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 51,59 ລ້ານໂດລາ ແລະ ຂາຍໂດລາໄດ້ 26,92 ລ້ານໂດລາ) ແຕ່ ຂາຍເງິນບາດສຸດທິ 1.500,06 ລ້ານບາດ (ໃນນີ້ ຊື້ບາດໄດ້ 286,99 ລ້ານບາດ ແລະ ຂາຍບາດໄດ້ 1.787,06 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ ເງິນໂດລາເພີ່ມຂຶ້ນ 6,71% ແລະ ເງິນບາດເພີ່ມຂຶ້ນ 70,10%.
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາສຸດທິ ຈໍານວນ 14,77 ລ້ານໂດລາ ແລະ ຂາຍເງິນບາດສຸດທິ ຈໍານວນ 33 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈໍານວນ 5,44 ລ້ານໂດລາສະຫະລັດ ແລະ ເງິນບາດຈໍານວນ 12 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ບໍ່ມີການເຄື່ອນໄຫວ.

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນໍ້າໜັກ;

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີຜ່ານມາ 19-25/05/2017 | | ອາທິດທີ 26/05/-01/06/2017 | | (%) +ເພີ່ມຂຶ້ນ /-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **46,38** | **186,65** | **51,59** | **286,99** | **11,23%** | **53,76%** |
| - ທ/ຄທຸລະກິດລັດ | 13,70 | 51,38 | 10,87 | 106,37 | -20,66% | 107,03% |
| - ທ/ຄທຸລະກິດອື່ນໆ | 32,68 | 135,27 | 40,72 | 180,62 | 24,60% | 33,53% |
| **2. ການຂາຍເງິນຕາຕ່າງປະເທດ** | **27,19** | **1.032,66** | **26,92** | **1.787,05** | **-0,99%** | **73,05%** |
| - ທ/ຄທຸລະກິດລັດ | 10,63 | 99,47 | 15,31 | 263,98 | 44,03% | 165,39% |
| - ທ/ຄທຸລະກິດອື່ນໆ | 16,56 | 933,19 | 11,61 | 1.523,07 | -29,89% | 63,21% |
| **ຊື້-ຂາຍສຸດທິ ທທກ** | **19,19** | **-846,01** | **24,67** | **-1.500,06** | **28,56%** | **77,31%** |
| - ຜິດດ່ຽງ ຊື້-ຂາຍ | 41,38% | -453,26% | 47,82% | -522,69% | 15,57% | 15,32% |
| - ມູນຄ່າການຊື້-ຂາຍ | **73,57** | **1.219,31** | **78,51** | **2.074,04** | **6,71%** | **70,10%** |
| **3. ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ** | **-16,72** | **0,00** | **-14,77** | **-33,00** | | |
| - ທຫລ ຊື້ຈາກ ທທກ | 1,18 | 0,00 | 1,18 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 17,90 | 0,00 | 15,95 | 33,00 | | |
| **4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **0,68** | **35,34** | **5,44** | **12,00** | | |
| **5. ທຫລ ກັບ ພາກສ່ວນ ອື່ນໆ** | **0,03** | **0,14** | **0,00** | **0,00** | | |
| -ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,03 | 0,14 | 0,00 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ໃນເດືອນ 05/2017 ຄາດວ່າຢູ່ໃນລະດັບ 1,31% ຫຼຸດລົງຈາກ 1,52% ທຽບໃສ່ເດືອນ 04/2017.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເຂົ້າເງິນຕາຕ່າງປະເທດ ໃນອາທິດນີ້ ຫຼຸດລົງ 17,8% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 47,63 ລ້ານໂດລາສະຫະລັດທຽບເທົ່າ. ໃນນັ້ນ ໄດ້ອະນຸຍາດໃຫ້ ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ເພີ່ມຂຶ້ນ 1% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 82,68 ລ້ານໂດລາສະຫະລັດທຽບເທົ່າ.

## 3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 1.022 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 129 ສະບັບ ເທົ່າກັບ 14,44% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 482,10 ຕື້ກີບ ເພີ່ມຂຶ້ນ 31,76 ຕື້ກີບ ເທົ່າກັບ 7,05% ເມື່ອທຽບໃສ່ອາທິດຜ່ານມາ;

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (26/05/-01/06/2017) ມີທັງໝົດ 3.476 ຄັ້ງ ໃນນັ້ນປະກອບດ້ວຍ:

- ສະກຸນເງິນກີບຈຳນວນ 3.348 ຄັ້ງ ລວມມູນຄ່າການໂອນທັງໝົດໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ເພີ່ມຂຶ້ນ 96,16 ຕື້ກີບ ຈາກ 898,63 ຕື້ກີບ ມາເປັນ 994,79 ຕື້ກີບ ເທົ່າກັບ 10,70%;

- ກະຊວງການເງິນ: ມີການເຄື່ອນໄຫວຈຳນວນ 128 ຄັ້ງ, ມູນຄ່າການໂອນໃນອາທິດຫຼຸດລົງ 202,46 ຕື້ກີບ ຈາກ 207,93 ຕື້ກີບ ມາເປັນ 5,47 ຕື້ກີບ.

## 4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.034,71 ຈຸດ ເພີ່ມຂຶ້ນ 0,86% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 108.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 572 ຕື້ກີບ ຫຼຸດລົງ 17,45% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 65,89% ຂອງມູນຄ່າການຊື້-ຂາຍທັງໝົດ.

| ຊື່ | ດັດຊະນີອາທິດທີ 22-26/05/2017 | ດັດຊະນີອາທິດທີ 29/05/-02/06/2017 | (ເພີ່ມຂຶ້ນ+)/(ຫຼຸດລົງ-) | ໝາຍເຫດ |
|---|---|---|---|---|
| ດັດຊະນີຕະຫຼາດຫຼັກຊັບລາວ | 1.025,86 | 1.037,71 | -0,86 | |

ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX) (ຫົວໜ່ວຍມູນຄ່າ 1.000 ກີບ)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| ລາຍຊື່ | ຈຳນວນ(ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ | 258.500 | 1.367.975.000 | 5.292 | 78.800 | 416.620.000 | 5.287 | -69,52 | -69,54 | -5 |
| ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ | 107.500 | 540.055.000 | 5.024 | 27.800 | 141.380.000 | 5.086 | -74,14 | -73,82 | 62 |
| ບໍລິສັດລາວເວີນ ມະຫາຊົນ | - | - | 7.000 | 2.000 | 14.000.000 | 7.000 | - | - | - |
| ບໍລິສັດປິໂຕລ້ຽມເທລດ ດິ້ງລາວ ມະຫາຊົນ | 6.500 | 13.000.000 | 2.000 | - | - | 2.000 | - | - | - |
| ບໍລິສັດສຸວັນນີໂຮມເຊັນເຕີ ມະຫາຊົນ | 7.900 | 23.650.000 | 2.994 | - | - | 3.000 | - | - | 6 |
| ທັງໝົດ | 380.400 | 1.944.680.000 | 5.112 | 108.600 | 572.000.000 | 5.267 | -71,45 | -70,59 | |

## 3. ວຽກງານອື່ນໆ ທີ່ພົ້ນເດັ່ນ.

- **ສຳເລັດການຈັດກອງປະຊຸມ ແລະ ສຳມະນາຕ່າງໆ:** ❶ ກອງປະຊຸມປຶກສາຫາລືທົບທວນຄືນກ່ຽວກັບແຜນການລະດົມແຫຼ່ງທຶນດຸ່ນດ່ຽງງົບປະມານ ທີ່ (ທຫລ); ❷ ກອງປະຊຸມຄົ້ນຄວ້າແກ້ໄຂບັນຫາຂອງບໍລິສັດພີເອັສ ແລະ ບັນດາບໍລິສັດ ທີ່ດຳເນີນທຸລະກິດທາງດ້ານການເງິນ ທີ່ບໍ່ສອດຄ່ອງກັບລະບຽບກົດໝາຍ ຂອງ ສປປ ລາວ ທີ່ (ກຄທ); ❸ ກອງປະຊຸມ ຄະນະຮ່າງດຳລັດ ວ່າດ້ວຍການປັບປຸງສູນຂໍ້ມູນຂ່າວສານສິນເຊື່ອ ທີ່ (ກຄທ) ແລະ ❹ ກອງປະຊຸມກ່ຽວກັບວຽກງານການປະເມີນຄວາມສ່ຽງລະດັບຊາດ ທີ່ (ທຫລ);

❺ ກອງປະຊຸມປະກອບຄຳເຫັນຕໍ່ຮ່າງແຜນແມ່ບົດ ແລະ ແຜນການຈັດຕັ້ງປະຕິບັດ ການພັດທະນາການຄຸ້ມຄອງທະນາຄານທຸລະກິດຕາມຫຼັກການບາເຊວ; ❻ ກອງປະຊຸມກ່ຽວກັບຈຸດປະສານງານຂອງສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ ຄັ້ງທີ 6 ໃນວັນທີ 30 ພຶດສະພາ 2017 ທີ່ (ໂຮງແຮມເມີຄຽວ) ແລະ ກອງປະຊຸມສຳມະນາຮ່ວມກັນລະຫວ່າງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບແຫ່ງປະເທດໄທ ໃນຫົວຂໍ້ "ວຽກງານຕະຫຼາດທຶນສຳລັບສື່ມວນຊົນ" ໃນວັນທີ 2 ມິຖຸນາ 2017, ຢູ່ ຕລຊລ.

- ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ສຳເລັດການລົງໄປເຄື່ອນໄຫວວຽກງານລັດຖະການຢູ່ທ້ອງຖິ່ນ ທີ່ (ແຂວງ ຫຼວງພະບາງ);
- ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຄະນະນຳ ທຫລ ຂອງຄະນະຊ່ຽວຊານຈາກ ທະນາຄານໂລກ;
- ສຳເລັດພິທີສະເຫຼີມສະຫຼອງວັນເດັກນ້ອຍສາກົນ ແລະ ເຂົ້າຮ່ວມຂະບວນການອອກແຮງງານ, ປູກຕົ້ນໄມ້ ເນື່ອງໃນວັນປູກຕົ້ນໄມ້ແຫ່ງຊາດ;
- ສຳເລັດການຄົ້ນຄວ້າອອກໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບກິຕິມະສັກ ໃຫ້ແກ່ຮອງຜູ້ອຳນວຍການ ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ;
- ສຳເລັດການອອກແຈ້ງການ ເຖິງພໍ່ແມ່ປະຊາຊົນ, ທະນາຫານ ແລະ ຕຳຫຼວດ ກ່ຽວກັບ ບໍ່ໃຫ້ຫຼົງເຊື່ອຕໍ່ການໂຄສະນາຂອງ ບໍລິສັດ ພີເອັສ.

**III. ແຜນວຽກຈຸດສຸມອາທິດຕໍ່ໄປ:**

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ;
- ສືບຕໍ່ຄົ້ນຄວ້າການກຳນົດອັດຕາສ່ວນການຖືຄອງຮຸ້ນຂອງຜູ້ຖືຮຸ້ນລາຍໃຫຍ່ ໃນບໍລິສັດຈົດທະບຽນ ໃຫ້ຢູ່ໃນລະຫວ່າງ 60-70% ຂອງຈຳນວນຮຸ້ນທັງໝົດ;
- **ກະກຽມຈັດກອງປະຊຸມ ແລະ ສຳມະນາຕ່າງໆ:** ❶ ກອງປະຊຸມສ່ອງສາຍວຽກງານສາຍພັກ ແລະ ສາຍລັດປະຈຳເດືອນ ພຶດສະພາ 2017 ທີ່ (ທຫລ); ❸ ກອງປະຊຸມປຶກສາຫາລືກ່ຽວກັບສະພາບອັດຕາແລກປ່ຽນ ທີ່ (ທຫລ); ❹ ກອງປະຊຸມປຶກສາຫາລືກ່ຽວກັບການຜ່ານຮ່າງແຜນປັບປຸງ ແລະ ພັດທະນາລະບົບເຄື່ອຄ່າຍຂອງ ທຫລ ທີ່ (ທຫລ) ແລະ ❺ ກອງປະຊຸມປຶກສາຫາລືກ່ຽວກັບວຽກງານການນຳໃຊ້ຕູ້ເອທີເອັມ (ATM) ຮ່ວມກັນລະຫວ່າງທະນາຄານທຸລະກິດດ້ວຍກັນ ທີ່ (ທຫລ);
- ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ກະກຽມລົງໄປເຄື່ອນໄຫວວຽກງານລັດຖະການຢູ່ທ້ອງຖິ່ນ ທີ່ (ແຂວງ ຊຽງ ຂວາງ ແລະ ແຂວງ ຈຳປາສັກ);
- ກະກຽມຄວາມພ້ອມທຸກດ້ານໃຫ້ແກ່ກອງປະຊຸມປັ້ນດຳເນີນຊີວິດການເມືອງປ່ວແປງພັກຂອງ ທຫລ ໃນປີ 2017.

ຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ ຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ